**ມິຊຊາອາທິດທີ 4 ກຳມະດາ**

**ວັນທີ 31 ມັງກອນ 2021**



**ພຣະວໍຣະສານໂດຍນັກບຸນມັກໂກ 1, 21-28**

ໃນເວລານັ້ນ, ພຣະເຢຊູເຈົ້າພ້ອມທັງພວກສາວົກໄດ້ສະເດັດໄປເຖິງເມືອງກາຟາກນາອຸມ. ພໍດີແມ່ນວັນເສົາ, ພຣະອົງຈຶ່ງສະເດັດເຂົ້າໄປໃນໂຮງທຳທັນທີແລະສັ່ງສອນ. ປະຊາຊົນພາກັນຕົກສະເງີ້ປະຫລາດໃຈໃນຄຳສັ່ງສອນຂອງພຣະອົງ, ຍ້ອນວ່າພຣະອົງຊົງສັ່ງສອນຢ່າງຄົນຜູ້ມີສິດຕ່າງກັນກັບບັນດານັກກົດໝາຍ. ໃນບັນດາຜູ້ຄົນທີ່ຢູ່ໃນໂຮງທຳນັ້ນ, ມີຄົນໜຶ່ງຖືກຈິດຊົ່ວຮ້າຍທໍຣະມານຮ້ອງຂຶ້ນວ່າ: “ເຢຊູຊາວນາຊາແຣັດເອີຍ,ທ່ານຢາກເຮັດຫຍັງກັບພວກເຮົາ?ທ່ານມາທຳໃຫ້ພວກເຮົາຕ້ອງຈິບຫາຍຊັ້ນບໍ? ເຮົາຮູ້ດີວ່າທ່ານແມ່ນໃຜ. ທ່ານແມ່ນຜູ້ສັກສິດຂອງພຣະເຈົ້າ.” ພຣະເຢຊູເຈົ້າຈຶ່ງນາບຂູ່ມັນວ່າ: “ມິດ! ແລະຈົ່ງອອກຈາກຄົນນີ້”. ຈິດຊົ່ວຮ້າຍກໍທຳໃຫ້ຄົນນັ້ນຊັກດີ້ນຢ່າງຣຸນແຮງ ແລ້ວອອກໄປພ້ອມທັງຮ້ອງໂຮອຶກກະທຶກ. ຄົນທັງຫລາຍພາກັນຕົກໃຈຢ້ານໄຕ່ຖາມກັນວ່າ: “ນີ້ແມ່ນຫຍັງກັນນໍ! ຜູ້ປະກາດຄຳສອນໃໝ່ນີ້ເກີນວ່າມີສິດແທ້! ແມ່ນວ່າຈິດຊົ່ວຮ້າຍເພິ່ນກໍຍັງສັ່ງໄດ້ແລະມັນກໍຟັງຄວາມເພິ່ນເສຍດ້ວຍ”. ຊື່ສຽງຂອງພຣະອົງຊ່າລືໄປທົ່ວແຂວງຄາລີເລ.

ນີ້ແມ່ນວາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມກ 1, 21-28**

ອາທິດທີ່ຜ່ານມາ, ເມື່ອຢວງບັບຕິສຕາຖືກຈັບ, ພຣະເຢຊູເຈົ້າກໍສືບຕໍ່ພາລະກິດຂອງທ່ານດ້ວຍການປະກາດຂ່າວດີແຫ່ງອານາຈັກສະຫວັນແລະການເປັນທຸກກັບໃຈໃຫ້ກັບທຸກຄົນທີ່ຟັງພຣະອົງ.ຍ້ອນອານາຈັກສະຫວັນອັນແມ່ນຕົວຂອງພຣະອົງເອງໄດ້ຢູ່ທ່າມກາງພວກເຂົາແລ້ວ.

ວັນອາທິດນີ້, ວາຈາພຣະເຈົ້າໄດ້ເຜີຍສຳແດງໃຫ້ພວກເຮົາຮູ້ວ່າພຣະເຢຊູຜູ້ປະກາດເທດສອນນີ້ແມ່ນໂມແຊຄົນໃໝ່. ພຣະອົງແມ່ນວາຈາຂອງພຣະເຈົ້າ. ແລະວາຈາຂອງພຣະອົງມີລິດອຳນາດແຕກຕ່າງໄປຈາກວາຈາອື່ນ. ຍ້ອນວາຈາຂອງພຣະອົງສາມາດປົດປ່ອຍຜູ້ທີ່ຟັງພຣະອົງອອກຈາກອຳນາດຂອງມານຮ້າຍ.

ໃນບົດອ່ານທີໜຶ່ງຈາກໜັງສືປະມວນກົດໝາຍຊຶ່ງພວກເຮົາໄດ້ຟັງວັນນີ້,ໂມແຊໄດ້ບອກກັບປະຊາກອນອິສຣາແອນວ່າ: "ພຣະອົງພຣະເຈົ້າຂອງພວກເຈົ້າຈະໃຫ້ມີປະພາສົກຄືເຮົາປາກົດຂຶ້ນທ່າມກາງພວກເຈົ້າແລະຈາກພີ່ນ້ອງຂອງພວກເຈົ້າ. ຈົ່ງຟັງເພິ່ນເຖີດ". ພຣະເຈົ້າກ່າວຕໍ່ໄປອີກວ່າ: "ເຮົາຈະເອົາວາຈາຂອງເຮົາໃສ່ໃນປາກຂອງເພິ່ນ ແລະເພິ່ນຈະປາກເວົ້າທຸກສິ່ງທີ່ເຮົາຈະບອກໃຫ້ເວົ້າ". ສິ່ງນີ້ສະທ້ອນໃຫ້ເຫັນວ່າ ປະພາສົກແມ່ນຜູ້ທີ່ປາກເວົ້າໃນນາມຂອງພຣະເຈົ້າແລະຈະກ່າວແຕ່ວາຈາຂອງພຣະອົງເທົ່ານັ້ນ.

ສ່ວນໃນບົດອ່ານທີສອງນັກບຸນເປົາໂລກ່າວກັບຊາວໂກຣິນໂທວ່າ: ຜູ້ທີ່ເປັນຂອງພຣະເຈົ້າຈະຄິດຫາແຕ່ວຽກງານຂອງພຣະອົງ. ສ່ວນຜູ້ທີ່ເປັນຂອງໂລກກໍຈະຄິດຫາກັງວົນແຕ່ສິ່ງທີ່ເປັນຂອງໂລກ. ຫລືເວົ້າອີກຢ່າງ, ຜູ້ທີ່ເປັນປະພາສົກຂອງພຣະເຈົ້າບໍ່ຄວນກັງວົນນຳສິ່ງອື່ນນອກຈາກການປະກາດວາຈາຂອງພຣະອົງເທົ່ານັ້ນ.

ໃນພຣະວໍລະສານວັນນີ້, ນັກບຸນມັກໂກກໍໄດ້ຍົກໃຫ້ພວກເຮົາເຫັນເຖິງພຣະເຢຊູ, ຜູ້ເປັນໂມແຊຄົນໃໝ່ໄດ້ສັ່ງສອນຢູ່ໃນໂຮງທຳໃນວັນຊາບາໂຕ. ວາຈາຂອງພຣະອົງເປັນວາຈາທີ່ຊົງລິດແລະແຕກຕ່າງໄປຈາກຄຳເທດສອນຂອງພວກນັກກົດໝາຍ. ຍ້ອນວາຈາຂອງພຣະອົງສາມາດປົດປ່ອຍຄົນທີ່ຖືກຈິດຊົ່ວຮ້າຍສິງໃຫ້ເປັນອິດສະລະໄດ້.

ພວກເຮົາຜູ້ຟັງວາຈາຂອງພຣະເຈົ້ານີ້, ພວກເຮົາໄດ້ເຊື່ອພຣະອົງບໍ? ພວກເຮົາເຊື່ອບໍ່ວ່າວາຈາຂອງພຣະອົງຈະສາມາດປົດປ່ອຍພວກເຮົາອອກຈາກອຳນາດຂອງຈິດຊົ່ວຮ້າຍ, ອອກຈາກການຜູກມັດຂອງບາບເພື່ອໃຫ້ພວກເຮົາມີອິດສະລະໃນການເປັນລູກຂອງພຣະອົງ. ພວກເຮົາເຊື່ອບໍ່ວ່າວາຈາຂອງພຣະອົງຈະປະທານຊີວິດນິລັນດອນໃຫ້ພວກເຮົາ?

**ພາວະນາ**

ໂອພຣະເຢຊູເຈົ້າ, ຜູ້ເປັນວາຈາຂອງພຣະເຈົ້າ, ໂຜດເພີ່ມທະວີຄວາມເຊື່ອໃຫ້ລູກດ້ວຍ. ເພື່ອລູກຈະໄດ້ເຊື່ອໃນພຣະອົງຜູ້ເປັນພຣະວາຈານາດທີ່ໄດ້ລົງມາເປັນມະນຸດ ເພື່ອປົດປ່ອຍລູກອອກຈາກການບາບອັນນຳໄປສູ່ຄວາມຕາຍນັ້ນເທີ້ນ. ອາແມນ

ຄຸນພໍ່ ອົງຕອນ ກຽດຕິສັກ